ສຳນັກງານ ຄຄຊ
ເລກທີ......0780
ວັນທີ 07 AUG 2019
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມຮ່ວມມືສາກົນ

ເລກທີ 05 /ກຮສ
ນະຄອນຫຼວງວຽງຈັນ, ວັນທີ 07 ສິງຫາ 2019

# ຂໍ້ຕົກລົງ

## ວ່າດ້ວຍການແບ່ງຄວາມຮັບຜິດຊອບພາຍໃນກົມຮ່ວມມືສາກົນ

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຮ່ວມມືສາກົນ ສະບັບເລກທີ 1249/ທຫລ, ລົງວັນທີ 15 ທັນວາ 2017;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການແຕ່ງຕັ້ງ ຫົວໜ້າກົມຮ່ວມມືສາກົນ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 159/ນ.ຍ, ລົງວັນທີ 10 ມິຖຸນາ 2019;
- ອີງຕາມການເຫັນດີເປັນເອກະພາບ ພາຍໃນກົມຮ່ວມມືສາກົນ ຄັ້ງວັນທີ 5 ພຶດສະພາ 2019.

## ຫົວໜ້າກົມຮ່ວມມືສາກົນ ທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1.** ການແບ່ງຄວາມຮັບຜິດຊອບພາຍໃນ ຄະນະກົມຮ່ວມມືສາກົນ ດັ່ງລາຍລະອຽດລຸ່ມນີ້:

1. **ທ່ານ ນາງ ຟອງຈິນດາ ແສງສຸລິວົງ, ຫົວໜ້າກົມຮ່ວມມືສາກົນ ຮັບຜິດຊອບ:**
- ຊີ້ນຳວຽກງານ ການເມືອງແນວຄິດ ແລະ ວຽກງານຮອບດ້ານຂອງກົມຮ່ວມມືສາກົນ;
- ລົງເລິກຊີ້ນຳວຽກງານພະແນກຄົ້ນຄວ້ານະໂຍບາຍຮ່ວມມືຕ່າງປະເທດ;
- ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຄະນະຜູ້ວ່າການ ທະນາຄານແຫ່ງ ສປປ ລາວ.

2. **ທ່ານ ນາງ ຈັນສຸກ ພົມມະວັນ, ຮອງຫົວໜ້າກົມຮ່ວມມືສາກົນ ຮັບຜິດຊອບ:**
- ຊ່ວຍຫົວໜ້າກົມໃນການຊີ້ນຳ-ນຳພາວຽກງານ ການເມືອງແນວຄິດ ແລະ ວຽກງານລວມຂອງກົມຮ່ວມມືສາກົນ;
- ລົງເລິກຊີ້ນຳວຽກງານພະແນກຮ່ວມມືສອງຝ່າຍ;
- ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຫົວໜ້າກົມຮ່ວມມືສາກົນ ແລະ ຄະນະຜູ້ວ່າການ ທະນາຄານແຫ່ງ ສປປ ລາວ.

3. **ທ່ານ ນາງ ອ່ອນຈັນ ໄຊຄຳພັງ, ຮອງຫົວໜ້າກົມຮ່ວມມືສາກົນ ຮັບຜິດຊອບ:**
- ຊ່ວຍຫົວໜ້າກົມໃນການຊີ້ນຳ-ນຳພາວຽກງານ ການເມືອງແນວຄິດ ແລະ ວຽກງານລວມຂອງກົມຮ່ວມມືສາກົນ;
- ລົງເລິກຊີ້ນຳວຽກງານພະແນກຮ່ວມມືອົງການການເງິນສາກົນ;

- ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຫົວໜ້າກົມຮ່ວມມືສາກົນ ແລະ ຄະນະຜູ້ອໍານວຍການ ທະນາຄານແຫ່ງ ສປປ ລາວ.

4. **ທ່ານ ສົມປະສົງ ພົມມະສານ, ຮອງຫົວໜ້າກົມຮ່ວມມືສາກົນ ຮັບຜິດຊອບ:**

- ຊ່ວຍຫົວໜ້າກົມໃນການຊີ້ນໍາ-ນໍາພາວຽກງານ ການເມືອງແນວຄິດ, ວຽກງານລວມຂອງກົມຮ່ວມມືສາກົນ ແລະ ວຽກງານ 3 ອົງການຈັດຕັ້ງມະຫາຊົນຂອງກົມຮ່ວມມືສາກົນ;
- ລົງເລິກຊີ້ນໍາວຽກງານພະແນກຮ່ວມມືຫຼາຍຝ່າຍ;
- ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຫົວໜ້າກົມຮ່ວມມືສາກົນ ແລະ ຄະນະຜູ້ອໍານວຍການ ທະນາຄານແຫ່ງ ສປປ ລາວ.

**ມາດຕາ 2.** ກົມຮ່ວມມືສາກົນ, ພະນັກງານຂອງກົມຮ່ວມມືສາກົນ, ພວກກ່ຽວທີ່ຖືກແຕ່ງຕັ້ງ ແລະ ພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ເປັນຢ່າງດີ.

**ມາດຕາ 3.** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມ**

ທະນາຄານແຫ່ງ ສປປ ລາວ
ກົມຮ່ວມມືສາກົນ

ພອງຈິນດາ ແສງສຸລິວົງ

ສໍາເນົາສົ່ງ:
- ຄະນະຜູ້ອໍານວຍການ ທຫລ ເພື່ອຊາບ;
- ບັນດາກົມພາຍໃນ ທຫລ ເພື່ອຊາບ;
- ຄະນະກົມຮ່ວມມືສາກົນ ເພື່ອຊາບ;
- ຄະນະພະແນກພາຍໃນກົມຮ່ວມມືສາກົນ ເພື່ອຊາບ.